**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ: 985 /ຖວທ
ນະຄອນຫຼວງວຽງຈັນ, ວັນທີ: 14 ກັນຍາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ສະຖານທີ່ພັກແຮມ

- ອີງຕາມກົດໝາຍ ວ່າດ້ວຍ ການທ່ອງທ່ຽວ ສະບັບປັບປຸງ ເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 9 ມີນາ 2017.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍ ການປັບປຸງວຽກງານບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020;

## ລັດຖະມົນຕີ ອອກຂໍ້ຕົກລົງ :

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງສະຖານທີ່ພັກແຮມ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ, ປອດໄພ, ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງ, ມີຄຸນນະພາບ ແລະ ມາດຕະຖານ ເພື່ອປົກປ້ອງສິດ, ຜົນປະໂຫຍດ ຂອງບຸກຄົນ ແລະ ນິຕິບຸກຄົນ ແນໃສ່ ດຶງດູດ ນັກທ່ອງທ່ຽວ, ນັກລົງທຶນ, ສົ່ງເສີມການຜະລິດສິນຄ້າພາຍໃນ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ສ້າງລາຍຮັບ, ສ້າງວຽກເຮັດງານທຳ, ກະຈາຍລາຍໄດ້ສູ່ສັງຄົມ ປະກອບສ່ວນພັດທະນາປະເທດຊາດໃຫ້ຂະຫຍາຍຕົວຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ສະຖານທີ່ພັກແຮມ**

ສະຖານທີ່ພັກແຮມ ແມ່ນ ສະຖານທີ່ພັກຊົ່ວຄາວ ຂອງ ນັກທ່ອງທ່ຽວ, ນັກເດີນທາງ ແລະ ບຸກຄົນທົ່ວໄປ ທີ່ມີຈຸດປະສົງພັກຜ່ອນ ນອນແຮມຄືນ ຫຼື ແຮມວັນ ຊຶ່ງມີລະບົບໂຄງສ້າງເປັນຕຶກ ຫຼື ອາຄານ ທີ່ມີການອອກແບບສວຍງາມຕາມຍຸກສະໄໝ ແລະ ຄວາມຕ້ອງການ, ມີຫຼາກຫຼາຍຮູບແບບ ແລະ ລະດັບທີ່ແຕກຕ່າງກັນ, ມີລະບົບບໍລິຫານຈັດການ ແລະ ການບໍລິການໃນຮູບແບບທຸລະກິດ, ມີສິ່ງອຳນວຍຄວາມສະດວກ ທີ່ມີຄຸນນະພາບ, ມາດຕະຖານ, ສະອາດ ແລະ ປອດໄພ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງແຮມ (Hotel)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ທີ່ມີ 20 ຫ້ອງນອນຂຶ້ນໄປ ຕາມ

ມາດຕະຖານຂອງໂຮງແຮມ ໂດຍທົ່ວໄປຈະສ້າງຕັ້ງຂຶ້ນຢູ່ຕາມຕົວເມືອງ ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການທ່ອງທ່ຽວ;

2. **ສະຖານທີ່ພັກແຮມຕາມແຫຼ່ງທ່ອງທ່ຽວ (Resort)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ທີ່ມີລັກສະນະເປັນຕຶກ, ອາຄານດ່ຽວ, ວິນລາ, ບັງກາໂລ, ລອດຈ ຫຼື ຄະລືຫາດ (Villas, Bungalow, Lodge) ທີ່ມີ 30 ຫ້ອງນອນ ຫຼື 30 ອາຄານດ່ຽວ ຂຶ້ນໄປ ຕາມມາດຕະຖານຂອງຣີສອດ ໂດຍທົ່ວໄປຈະສ້າງຕັ້ງຂຶ້ນຢູ່ຕາມສະ ຖານທີ່ທ່ອງທ່ຽວທຳມະຊາດ ຫຼື ເຂດທີ່ປົກຫຸ້ມໄປດ້ວຍທຳມະຊາດ;
3. **ເຮືອນພັກ (Guest House)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ທີ່ມີ 10 ຫ້ອງນອນຂຶ້ນໄປ ຕາມມາດຕະຖານຂອງເຮືອນພັກ ໂດຍທົ່ວໄປຈະສ້າງຕັ້ງຂຶ້ນຢູ່ຕາມຕົວເມືອງ ຫຼື ຊຸມນະບົດ ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການທ່ອງທ່ຽວ;
4. **ຫໍພັກແຮມ (Hostel)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ທີ່ມີ 10 ຫ້ອງນອນຂຶ້ນໄປ ຕາມມາດຕະຖານຂອງຫໍພັກແຮມ ຊຶ່ງຫ້ອງນອນ, ຫ້ອງນ້ຳ ແລະ ຫ້ອງຮັບປະທານອາຫານ ຈະມີລັກສະນະລວມ ແລະ ສາມາດໃຊ້ຮ່ວມກັນໄດ້ ແບບຄອບຄົວ ຫຼື ໝູ່ຄະນະ ໂດຍທົ່ວໄປຈະສ້າງຕັ້ງຂຶ້ນຢູ່ຕາມຕົວເມືອງ ຫຼື ຊຸມນະບົດ ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການທ່ອງທ່ຽວ ໂດຍສະເພາະຢູ່ໃກ້ກັບສະຖານີຂົນສົ່ງ, ສະຖານສຶກສາ, ໂຮງໝໍ ແລະ ອື່ນໆ;
5. **ອິນ (Inn)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ຕາມມາດຕະຖານຂອງ ອິນ ໂດຍທົ່ວໄປຈະມີລັກສະນະ ແລະ ຮູບແບບການບໍລິການຄືກັບໂຮງແຮມ;
6. **ໂຮງແຮມບູຕິກ (Boutique Hotel)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ທີ່ມີລັກສະນະຍ້ອນຍຸກ ມີເອກະລັກສະເພາະຕົວ ຕາມຍຸກສະໄໝ ແລະ ມາດຕະຖານຂອງໂຮງແຮມບູກຕິກ ທີ່ມີ 10 ຫ້ອງນອນຂຶ້ນໄປ ໂດຍທົ່ວໄປຈະມີລັກສະນະ ແລະ ຮູບແບບການບໍລິການຄືກັບໂຮງແຮມ;
7. **ເຮືອນພັກປະຊາຊົນ (Homestay)** ໝາຍເຖິງ ອາຄານບ້ານເຮືອນຂອງປະຊາຊົນ ທີ່ປະກອບມີສິ່ງອຳນວຍຄວາມສະດວກດ້ານການພັກແຮມ ຂັ້ນພື້ນຖານ ເພື່ອຮອງຮັບການພັກແຮມຂອງນັກທ່ອງທ່ຽວທີ່ມີຄວາມສົນໃຈຢາກສຶກສາຮຽນຮູ້ວິຖີດຳລົງຊີວິດ ແລະ ສຳຜັດການທຳມາຫາກິນແບບວິຖີຊີວິດຕາມປະເພນີຂອງຜູ້ຄົນໃນຊຸມຊົນທ້ອງຖິ່ນ;
8. **ເຮືອນເຊົ່າ** ໝາຍເຖິງ ຕຶກ ຫຼື ອາຄານ ທີ່ມີສິ່ງອຳນວຍຄວາມສະດວກສຳລັບການຢູ່ອາໄສໄລຍະຍາວ ຊຶ່ງປະກອບມີຫ້ອງນັ່ງຫຼິ້ນ, ຫ້ອງປຸງແຕ່ງອາຫານ, ຫ້ອງຮັບປະທານອາຫານ, ຫ້ອງນ້ຳ ແລະ ຫ້ອງນອນ ທີ່ມີລັກສະນະຄວາມເປັນສ່ວນຕົວສູງ;
9. **ຫ້ອງຊຸດ (Apart ment)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ໄລຍະຍາວ ທີ່ມີ 50 ຫ້ອງນອນຂຶ້ນໄປ ຕາມມາດຕະຖານຂອງອາພາດເມັນ, ລັກສະນະຂອງຫ້ອງ ຈະເປັນຫ້ອງຊຸດ ທີ່ປະກອບດ້ວຍຫ້ອງນອນ, ຫ້ອງນັ່ງຫຼິ້ນ, ຫ້ອງຮັບປະທານອາຫານ, ຫ້ອງປຸງແຕ່ງອາຫານ ແລະ ຫ້ອງນ້ຳ ໂດຍທົ່ວໄປຈະສ້າງຕັ້ງຂຶ້ນຢູ່ຕາມຕົວເມືອງ ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການທ່ອງທ່ຽວ;
10. **ໂຮງແຮມຄອນໂດມີນຽມ (Condominium)** ໝາຍເຖິງ ຕຶກ, ອາຄານ ຫຼື ຊັ້ນໃດຊັ້ນໜຶ່ງຂອງຕຶກ ຫຼື ອາຄານຂອງຄອນໂດມີນຽມ ທີ່ດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ທີ່ມີ 50 ຫ້ອງນອນຂຶ້ນໄປ ຕາມມາດຕະຖານຂອງສະຖານທີ່ພັກແຮມຄອນໂດມີນຽມ ໂດຍທົ່ວໄປ ຈະສ້າງຕັ້ງຂຶ້ນຢູ່ຕາມຕົວເມືອງ ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການທ່ອງທ່ຽວ;
11. **ສະຖານທີ່ພັກແຮມຂອງນັກຂັບຂີ່ (Motel)** ໝາຍເຖິງ ຕຶກ ຫຼື ອາຄານ ຂອງສະຖານທີ່ພັກແຮມ ທີ່ມີ 10 ຫ້ອງນອນຂຶ້ນໄປ ຕາມມາດຕະຖານຂອງໂມເທວ ໂດຍທົ່ວໄປ ຈະສ້າງຕັ້ງຂຶ້ນຢູ່ຕາມເຂດຊານເມືອງ ທີ່ມີສະຖານທີ່ຈອດລົດສະດວກສະບາຍ;
12. **ຄ້າຍພັກແຮມ (Camp)** ໝາຍເຖິງ ສະຖານທີ່ພັກແຮມກາງອາກາດ ຢູ່ຕາມສະຖານທີ່ທ່ອງທ່ຽວທຳມະ

ຊາດ ໂດຍທົ່ວໄປ ສິ່ງກໍ່ສ້າງຈະມີລັກສະນະເປັນເຕັນ, ຕູບ ຫຼື ຮ້ານນ້ອຍ ແບບຊົ່ວຄາວ ຫຼື ສໍາເລັດຮູບ ສາມາດເຄື່ອນຍ້າຍໄດ້ຢ່າງງ່າຍດາຍ ເພື່ອນອນພັກຜ່ອນສໍາຜັດບັນຍາກາດບໍລິສຸດຈາກທໍາມະຊາດ, ການຊົມວິວທິວທັດທໍາມະຊາດທີ່ສວຍງາມ ແລະ ມີການບໍລິການຂັ້ນພື້ນຖານ ຕາມມາດຕະຖານຂອງຄ້າຍພັກແຮມ;

13. **ສະຖານທີ່ພັກແຮມເຄື່ອນທີ່** ໝາຍເຖິງ ພາຫານະ ທີ່ແລ່ນດ້ວຍເຄື່ອງຈັກກົນ ໄຟຟ້າ, ນໍ້າມັນ, ອາຍນໍ້າ, ຖ່ານຫີນ ແລະ ອື່ນໆ ເຊັ່ນ ລົດ, ລົດໄຟ, ເຮືອສໍາລານ ແລະ ພາຫານະອື່ນໆ ທີ່ມີເງື່ອນໄຂຕາມມາດຕະຖານຂອງສະຖານທີ່ພັກແຮມເຄື່ອນທີ່;
14. **ຫ້ອງແຖວ (Flat)** ໝາຍເຖິງ ຕຶກ ຫຼື ອາຄານ ທີ່ມີຫ້ອງຊຸດ 10 ຫ້ອງຂຶ້ນໄປ ສໍາລັບການເຊົ່າ ຫຼື ຊື້-ຂາຍ ແລະ ມີສິ່ງອໍານວຍຄວາມສະດວກໃນຊີວິດປະຈໍາວັນ ຂັ້ນພື້ນຖານ ສໍາລັບການພັກຢູ່ອາໄສ;
15. **ສິ່ງອໍານວຍຄວາມສະດວກດ້ານການພັກແຮມ** ໝາຍເຖິງ ວັດຖຸ ແລະ ການບໍລິການ ທີ່ສາມາດຕອບສະ ໜອງຄວາມຕ້ອງການຂອງຜູ້ໃຊ້ບໍລິການພັກແຮມ ຢ່າງມີຄຸນນະພາບ ແລະ ສະດວກສະບາຍ ເຊັ່ນ: ການເຂົ້າເຖິງຂໍ້ມູນຂ່າວສານ, ການເດີນທາງ, ອາຫານ, ການບັນເທີງ, ການກິລາເພື່ອສຸຂະພາບ, ການເສີມສວຍ ຫຼື ເສີມຄວາມງາມ, ການນວດ ສະປາ, ການພັກຜ່ອນ, ການພະຍາບານ, ຮ້ານສັບພະສິນຄ້າ, ສູນປະຊຸມ, ສູນອອກກໍາລັງກາຍ, ສະລອຍນໍ້າ, ຫ້ອງນໍ້າ, ສະຖານທີ່ພັກຜ່ອນ ແລະ ອື່ນໆ;
16. **ຫ້ອງຊຸດ** ໝາຍເຖິງ ຫ້ອງອະເນກປະສົງ ຕັ້ງຢູ່ພາຍໃນຕຶກ, ອາຄານ ຫຼື ສະຖານທີ່ພັກແຮມ ຊຶ່ງປະກອບມີຫ້ອງນອນ, ຫ້ອງນັ່ງຫຼິ້ນ, ຫ້ອງຮັບປະທານອາຫານ, ຫ້ອງປຸງແຕ່ງອາຫານ, ຫ້ອງນໍ້າ ແລະ ມີສິ່ງອໍານວຍຄວາມສະດວກດ້ານການພັກແຮມ;
17. **ທຸລະກິດພັກແຮມ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ຊຶ່ງກວມເອົາ ໂຮງແຮມ, ສະຖານທີ່ພັກແຮມຕາມແຫຼ່ງທ່ອງທ່ຽວ, ຫ້ອງຊຸດ, ສະຖານທີ່ພັກແຮມຄອນໂດມີນຽມ, ເຮືອນພັກ, ຫໍພັກແຮມ, ຄ້າຍພັກແຮມ, ສະຖານທີ່ພັກແຮມຂອງນັກຂັບຂີ່, ສະຖານທີ່ພັກແຮມເຄື່ອນທີ່ ແລະ ອື່ນໆທີ່ດໍາເນີນທຸລະກິດ ເພື່ອການພັກແຮມ;
18. **ການຈັດລະດັບມາດຕະຖານສະຖານທີ່ພັກແຮມ** ໝາຍເຖິງ ວິທີການ ແລະ ຂັ້ນຕອນການກໍານົດຄຸນລັກ ສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ກໍາມະວິທີ, ສິ່ງແວດລ້ອມ ແລະ ບັນຫາອື່ນ ທີ່ກ່ຽວຂ້ອງກັບມາດຕະຖານລວມ ແລະ ມາດຕະຖານສະເພາະຂອງສະຖານທີ່ພັກແຮມ ເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມານັ້ນ ໂດຍມີຮູບດາວຫ້າລ່ຽມ ເປັນສັນຍາລັກຂອງມາດຕະຖານ;
19. **ສັນຍາລັກມາດຕະຖານຂອງສະຖານທີ່ພັກແຮມ** ໝາຍເຖິງ ຮູບດາວຫ້າລ່ຽມ ນັບແຕ່ 1-5 ດາວ, ລະດັບ 1 ດາວ ແມ່ນລະດັບມາດຕະຖານຂັ້ນຕໍ່າສຸດ ແລະ ລະດັບ 5 ດາວ ແມ່ນລະດັບມາດຕະຖານຂັ້ນສູງສຸດ, ຊຶ່ງແຕ່ລະ ລະດັບ ມີຄວາມໝາຍທີ່ແຕກຕ່າງກັນ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສະຖານທີ່ພັກແຮມ

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ດໍາເນີນທຸລະກິດບໍລິການສະຖານທີ່ພັກແຮມ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ ສິ່ງອໍານວຍຄວາມສະດວກດ້ານຕ່າງໆ ເຊັ່ນ: ການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນຂ່າວສານທີ່ເປັນປະໂຫຍດ, ນະໂຍບາຍດ້ານພາສີ, ສ່ວຍສາອາກອນ, ແຮງງານ, ສິດນໍາໃຊ້ທີ່ດິນ, ການເຂົ້າເຖິງແຫຼ່ງທຶນ, ຄວາມສະເໝີພາບທາງດ້ານກົດໝາຍ, ການປົກປ້ອງສິດຜົນປະໂຫຍດ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 5 ຫຼັກການ ກ່ຽວກັບວຽກງານສະຖານທີ່ພັກແຮມ

ການດໍາເນີນທຸລະກິດບໍລິການສະຖານທີ່ພັກແຮມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດການທ່ອງທ່ຽວ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
3. ຮັບປະກັນຄວາມສະຫງົບ, ປອດໄພ, ສະດວກ, ສະອາດ, ມີຄຸນນະພາບ ແລະ ມາດຕະຖານ ດ້ານການບໍລິການສະຖານທີ່ພັກແຮມ;
4. ຮັບປະກັນການປົກປ້ອງສິດ, ຜົນປະໂຫຍດ, ການສົ່ງເສີມ ແລະ ຄວາມປອດໄພຕໍ່ສຸຂະພາບ, ຊີວິດ ແລະ ຊັບສິນຂອງຜູ້ໃຊ້ບໍລິການ ແລະ ຜູ້ປະກອບການທຸລະກິດບໍລິການສະຖານທີ່ພັກແຮມ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເພີ່ມທະວີ ການຄຸ້ມຄອງລັດ ຢ່າງລວມສູນ ເປັນເອກະພາບທົ່ວປະເທດ;
6. ປົກປ້ອງສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງ ຂອງລັດ, ລວມໝູ່, ປະຊາຊົນ ແລະ ຜູ້ລົງທຶນ;
7. ຮັບປະກັນຄວາມຖືກຕ້ອງ ຕາມຫຼັກການບໍລິການສະຖານທີ່ພັກແຮມ, ສຸຂະອະນາໄມ, ຄວາມສະອາດ, ປອດໄພ, ສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງ;
8. ຮັບປະກັນການອະນຸຍາດດຳເນີນທຸລະກິດ ໃຫ້ມີຄວາມສະດວກ, ກະທັດຮັດ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
9. ຮັບປະກັນຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ການແຂ່ງຂັນດ້ານທຸລະກິດ ທີ່ເປັນທຳ;
10. ເສີມຂະຫຍາຍ ແລະ ພັດທະນາສີມືແຮງງານ, ການບໍລິການດ້ານການພັກແຮມ, ການຊົມໃຊ້ຜະລິດຕະພັນພາຍໃນ, ການໂຄສະນາສົ່ງເສີມ ແລະ ສ້າງມາດຕະຖານສະຖານທີ່ພັກແຮມຢູ່ ສປປ ລາວ ໃຫ້ກ້າວສູ່ມາດຕະຖານສາກົນ;
11. ປົກປັກຮັກສາສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ ແລະ ວັດທະນະທຳ ທີ່ດີງາມຂອງຊາດ.

**ມາດຕາ 6 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບທຸລະກິດບໍລິການສະຖານທີ່ພັກແຮມ ລວມທັງ ທຸລະກິດອາພາດເມັນ, ຄອນໂດມີນຽມ, ຫ້ອງເຊົ່າ ແລະ ເຮືອນເຊົ່າທົ່ວໄປຢູ່ ສປປ ລາວ.

ຂໍ້ຕົກລົງສະບັບນີ້ ບໍ່ກວມເອົາກິດຈະການ ຕຶກ, ອາຄານ, ສະຖານທີ່ພັກ, ຫ້ອງພັກທາງລັດຖະການ ຫຼື ສາສະນະສະຖານ ທີ່ສ້າງຕັ້ງຂຶ້ນ ເພື່ອສາທາລະນະປະໂຫຍດ, ການກຸສົນ, ການຊ່ວຍເຫຼືອສັງຄົມ ທີ່ບໍ່ຫວັງຜົນກຳໄລ ແລະ ບໍ່ມີການເຄື່ອນໄຫວ ທີ່ມີລັກສະນະປະຈຳ ເພື່ອຫວັງຜົນທາງທຸລະກິດ ແລະ ການຄ້າ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານໂຄສະນາສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ, ສີມືແຮງງານ ການບໍລິການດ້ານການພັກແຮມ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ປະສົບການ, ການຝຶກອົບຮົມ, ການທັດສະນະສຶກສາ, ການຮຽນ-ການສອນ ແລະ ອື່ນໆ ທີ່ເປັນປະໂຫຍດຕໍ່ວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຢູ່ ສປປ ລາວ.

## ໝວດທີ 2
## ນະໂຍບາຍສົ່ງເສີມທຸລະກິດສະຖານທີ່ພັກແຮມ

**ມາດຕາ 8 ນະໂຍບາຍສົ່ງເສີມຕາມເຂດ**

ເພື່ອຜັນຂະຫຍາຍນະໂຍບາຍຂອງລັດ ກ່ຽວກັບການສົ່ງເສີມກິດຈະການຕາມຂະແໜງການ ແລະ ຕາມເຂດ,

ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ ແລະ ໄດ້ຮັບການຢັ້ງຢືນມາດຕະຖານສະຖານທີ່ພັກແຮມ ຈະໄດ້ຮັບການພິຈາລະນາດ້ານນະໂຍບາຍສົ່ງເສີມຕາມເຂດ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງຂອງ ສປປ ລາວ ດັ່ງນີ້:

- ເຂດ 1 ໝາຍເຖິງ ເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ບໍ່ເອື້ອອຳນວຍແກ່ການລົງທຶນ ແລະ ການດຳເນີນທຸລະກິດ. ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ສ້າງຕັ້ງຂຶ້ນຢູ່ເຂດດັ່ງກ່າວ ຈະໄດ້ຮັບນະໂຍບາຍຕາມມາດຕາ 9, 10 ຂອງຂໍ້ຕົກລົງສະບັບນີ້;
- ເຂດ 2 ໝາຍເຖິງ ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ເອື້ອອຳນວຍແກ່ການລົງທຶນ ແລະ ການດຳເນີນທຸລະກິດ. ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ສ້າງຕັ້ງຂຶ້ນຢູ່ເຂດດັ່ງກ່າວ ຈະບໍ່ມີນະໂຍບາຍ ເນື່ອງຈາກ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ມີຄວາມສະດວກສະບາຍ, ມີຄວາມພ້ອມສູງ ແລະ ສາມາດຮອງຮັບການລົງທຶນໄດ້ເປັນຢ່າງດີ;
- ເຂດ 3 ໝາຍເຖິງ ເຂດເສດຖະກິດສະເພາະ, ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ຕັ້ງຢູ່ເຂດ 3 ແມ່ນໃຫ້ປະຕິບັດຕາມນະໂຍບາຍຂອງເຂດເສດຖະກິດສະເພາະ ຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 9 ນະໂຍບາຍຍົກເວັ້ນອາກອນກຳໄລ ຕາມເຂດ**

ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ແລະ ໄດ້ຮັບການຢັ້ງຢືນມາດຕະຖານສະຖານ ທີ່ພັກແຮມ ຕາມຂໍ້ຕົກລົງສະບັບນີ້ ຢ່າງຖືກຕ້ອງ ນັບແຕ່ລະດັບ 1-5 ດາວ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳ ໄລ ຕາມເຂດ ເປັນເວລາຕິດຕໍ່ກັນ ໂດຍນັບແຕ່ມື້ໄດ້ຮັບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ ດັ່ງນີ້:

1. ລະດັບ 5 ດາວ ຕັ້ງຢູ່ເຂດ 1 ນະໂຍບາຍ 5 ປີ;
2. ລະດັບ 4 ດາວ ຕັ້ງຢູ່ເຂດ 1 ນະໂຍບາຍ 4 ປີ;
3. ລະດັບ 3 ດາວ ຕັ້ງຢູ່ເຂດ 1 ນະໂຍບາຍ 3 ປີ;
4. ລະດັບ 2 ດາວ ຕັ້ງຢູ່ເຂດ 1 ນະໂຍບາຍ 2 ປີ;
5. ລະດັບ 1 ດາວ ຕັ້ງຢູ່ເຂດ 1 ນະໂຍບາຍ 1 ປີ;
6. ເຂດ 3 ໃຫ້ປະຕິບັດຕາມນະໂຍບາຍເຂດເສດຖະກິດສະເພາະ.

ສຳລັບຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ບໍ່ໄດ້ຮັບການຢັ້ງຢືນມາດຕະຖານ ຫຼື ຈັດລະດັບດາວ ຈະບໍ່ມີນະໂຍບາຍຕາມມາດຕາ 9 ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 10 ນະໂຍບາຍຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ**

ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ແລະ ໄດ້ຮັບການຢັ້ງຢືນມາດຕະຖານສະຖານທີ່ພັກແຮມ ຫຼື ການຈັດລະດັບດາວ ນັບແຕ່ 1-5 ດາວ ຈະໄດ້ຮັບນະໂຍບາຍຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ 0% ພາຍໃນ 1 ປີ ນັບແຕ່ມື້ໄດ້ຮັບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ ສຳລັບການນຳເຂົ້າວັດຖຸປະກອນ, ເຄື່ອງຈັກກົນການຜະລິດ ແລະ ການປຸງແຕ່ງອາຫານ ເພື່ອຮັບໃຊ້ການບໍລິການ ແລະ ການຜະລິດຂອງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມໂດຍກົງ ທີ່ບໍ່ສາມາດຜະລິດ ຫຼື ຕອບສະໜອງຢູ່ພາຍໃນ ສປປ ລາວ.

## ໝວດທີ 3
## ປະເພດທຸລະກິດສະຖານທີ່ພັກແຮມ

**ມາດຕາ 11 ປະເພດທຸລະກິດສະຖານທີ່ພັກແຮມ**

ທຸລະກິດສະຖານທີ່ພັກແຮມ ມີ 2 ປະເພດ ດັ່ງນີ້ :

1. ທຸລະກິດພັກແຮມ :

   1.1 ໂຮງແຮມ;

   1.2 ໂຮງແຮມບູຕິກ;

   1.3 ໂຮງແຮມຄອນໂດມີນຽມ;

   1.4 ຣີສອດ: ວິນລ່າ, ລອດຈ, ບັງກາໂລ;

   1.5 ອິນ;

   1.6 ໂມເຕັນ;

   1.7 ໂຮສເທວ;

   1.8 ເຮືອນພັກ;

   1.9 ແຄມ;

2. ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າ:

   2.1 ຄອນໂດມີນຽມ;

   2.2 ອາພາດເມັນ;

   2.3 ເຮືອນເຊົ່າ;

   2.4 ຫ້ອງແຖວ.

## ໝວດທີ 4

## ມາດຕະຖານ ແລະ ການຈັດລະດັບສະຖານທີ່ພັກແຮມ

### ມາດຕາ 12 ມາດຕະຖານສະຖານທີ່ພັກແຮມ

ມາດຕະຖານສະຖານທີ່ພັກແຮມ ແມ່ນ ການກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ກຳມະວິທີ, ສິ່ງແວດລ້ອມ ແລະ ບັນຫາອື່ນ ທີ່ກ່ຽວຂ້ອງກັບມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງສະຖານທີ່ພັກແຮມ ເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມາຂ້າງເທິງນັ້ນ.

### ມາດຕາ 13 ມາດຕະຖານລວມ ແລະ ສະເພາະຂອງສະຖານທີ່ພັກແຮມ

ມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງສະຖານທີ່ພັກແຮມ ນອກຈາກດັ່ງກ່າວຢູ່ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງເປັນການກຳນົດລະດັບຄວາມແຕກຕ່າງທາງດ້ານປະລິມານ ແລະ ຄຸນລັກສະນະສະເພາະຂອງສິ່ງອຳນວຍຄວາມສະດວກດ້ານການພັກແຮມແຕ່ລະປະເພດ, ຊຶ່ງມາດຕະຖານລວມ ແລະ ມາດຕະຖານສະເພາະຂອງສະຖານທີ່ພັກແຮມ ຈະໄດ້ກຳນົດຕ່າງຫາກ.

### ມາດຕາ 14 ການຈັດລະດັບມາດຕະຖານສະຖານທີ່ພັກແຮມ

ສະຖານທີ່ພັກແຮມແຕ່ລະປະເພດ ຈະຖືກຈັດລະດັບມາດຕະຖານ ໂດຍຄະນະກຳມະການຈັດລະດັບມາດຕະຖານສະຖານທີ່ພັກແຮມ ຕາມຂໍ້ຕົກລົງສະບັບນີ້ ພາຍໃນ 1 ປີ ນັບແຕ່ມື້ໄດ້ຮັບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ ແລະ ໃນທຸກໆ 5 ປີ ນັບຈາກມື້ໄດ້ຮັບການຢັ້ງຢືນລະດັບມາດຕະຖານສະຖານທີ່ພັກແຮມ ຄັ້ງຫຼ້າສຸດເປັນຕົ້ນໄປຈະມີ

ການຕີລາຄາ ປະເມີນລະດັບມາດຕະຖານສະຖານທີ່ພັກແຮມຄືນໃໝ່ ໂດຍຖືເອົາເດືອນສຸດທ້າຍຂອງທຸກໆ 5 ປີເປັນຕົ້ນໄປ.

ຄະນະກຳມະການຈັດລະດັບມາດຕະຖານສະຖານທີ່ພັກແຮມ ຕ້ອງປະກອບມີຕົວແທນຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ໂດຍມີຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນປະທານ ໂດຍຕຳແໜ່ງ ແລະ ມີກອງເລຂາ ເປັນເສນາທິການ ຊ່ວຍວຽກ.

ຄະນະກຳມະການຈັດລະດັບມາດຕະຖານສະຖານພັກແຮມ ຈະກຳນົດໄວ້ໃນລະບຽບການ ຕ່າງຫາກ.

## ໝວດທີ 5

## ການອະນຸຍາດດຳເນີນທຸລະກິດສະຖານທີ່ພັກແຮມ

### ມາດຕາ 15 ການສະເໜີດຳເນີນທຸລະກິດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດ ໃຫ້ປະຕິບັດຕາມມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ ແລະ ແຈ້ງຂຶ້ນທະບຽນວິສາຫະກິດຢູ່ຂະແໜງອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງ, ພາຍຫຼັງຂຶ້ນທະບຽນວິສາຫະກິດຖືກຕ້ອງແລ້ວ ໃຫ້ປະກອບເອກະສານຕາມມາດຕາ 19 ຂໍ້ ກ ຂອງຂໍ້ຕົກລົງສະບັບນີ້ ແລະ ຍື່ນຄຳຮ້ອງຢູ່ຫ້ອງການຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ຢູ່ໃກ້ທີ່ສຸດ ແລະ ສະດວກທີ່ສຸດສຳລັບຜູ້ຍື່ນຄຳຮ້ອງ.

### ມາດຕາ 16 ບ່ອນຍື່ນຄຳຮ້ອງດຳເນີນທຸລະກິດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຍື່ນຄຳຮ້ອງດຳເນີນທຸລະກິດ ໃຫ້ປະຕິບັດຕາມມາດຕາ 15 ຂອງຂໍ້ຕົກລົງສະບັບນີ້, ເມື່ອຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ໄດ້ຮັບຄຳຮ້ອງຖືກຕ້ອງແລ້ວ ຕ້ອງສົ່ງໃຫ້ກົມຄຸ້ມຄອງການທ່ອງທ່ຽວ/ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນ 2 ວັນລັດຖະການ ນັບແຕ່ມື້ໄດ້ຮັບຄຳຮ້ອງເປັນຕົ້ນໄປ ເພື່ອຄົ້ນຄວ້າ ພິຈາລະນາ ໂດຍໄວ.

### ມາດຕາ 17 ກຳນົດເວລາ ພິຈາລະນາຄຳຮ້ອງ

ພາຍຫຼັງໄດ້ຮັບຄຳຮ້ອງດຳເນີນທຸລະກິດ ຫຼື ຍັ້ງຢືນການສືບຕໍ່ດຳເນີນທຸລະກິດຖືກຕ້ອງຄົບຖ້ວນແລ້ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງປະສານກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ພິຈາລະນາ ແລະ ອອກໃບອະນຸຍາດ ໃຫ້ເຈົ້າຂອງທຸລະກິດ ພ້ອມທັງແຈ້ງຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຜູ້ທີ່ຍື່ນຄຳຮ້ອງຮັບຊາບ ພາຍໃນ 7 ວັນລັດຖະການ ນັບແຕ່ມື້ຮັບຄຳຮ້ອງເປັນຕົ້ນໄປ ຫຼື ຕອບປະຕິເສດ ດ້ວຍເຫດຜົນທາງດ້ານກົດໝາຍ ໃນກໍລະນີບໍ່ເຫັນດີ.

### ມາດຕາ 18 ເງື່ອນໄຂການດຳເນີນທຸລະກິດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ຈະດຳເນີນທຸລະກິດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດສະຖານທີ່ພັກແຮມ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
2. ມີທຶນຈົດທະບຽນ ຖືກຕ້ອງ;
3. ເປັນບຸກຄົນ ຫຼື ນິຕິບຸກຄົນ ທີ່ກົດໝາຍ ບໍ່ເກືອດຫ້າມ.

**ມາດຕາ 19 ການປະກອບເອກະສານ ສະເໜີດຳເນີນທຸລະກິດ**

**ກ. ເອກະສານ ຄຳຮ້ອງ ສະເໜີດຳເນີນທຸລະກິດມີ ດັ່ງນີ້ :**

1. ໃບຄຳຮ້ອງ ສະເໜີດຳເນີນທຸລະກິດ 1 ໃບ;
2. ສຳເນົາ ໃບທະບຽນວິສາຫະກິດສະຖານທີ່ພັກແຮມ 1 ໃບ;
3. ສຳເນົາ ສຳນວນຄຳຮ້ອງຂໍຂຶ້ນທະບຽນວິສາຫະກິດ 1 ຊຸດ;
4. ສຳເນົາ ກົດລະບຽບພາຍໃນຂອງວິສາຫະກິດ 1 ຊຸດ;
5. ຮູບຖ່າຍເຈົ້າຂອງວິສາຫະກິດ ຂະໜາດ 3x4 ຊມ 2 ໃບ.

**ຂ. ເອກະສານ ຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດມີ ດັ່ງນີ້ :**

1. ໃບຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດ 1 ໃບ;
2. ໃບເສຍອາກອນ ຫຼື ໃບຢັ້ງຢືນເສຍອາກອນ ປະຈຳປີຫຼ້າສຸດ.

**ມາດຕາ 20 ທຸລະກິດສະຫງວນ**

ລັດ ສະຫງວນ ບາງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ມີຂະໜາດນ້ອຍ ແລະ ລົງທຶນໜ້ອຍ ໃຫ້ສະເພາະຄົນລາວ ຕາມທີ່ກຳນົດຢູ່ມາດຕາ 11 ຂໍ້ 1.7; 1.8; 1.9; ແລະ ຂໍ້ 2.3; 2.4 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 6

## ໃບອະນຸຍາດ ແລະ ການນຳໃຊ້ໃບອະນຸຍາດດຳເນີນທຸລະກິດ

**ມາດຕາ 21 ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ແມ່ນ ໃບຢັ້ງຢືນຈາກພາກລັດ ອະນຸຍາດໃຫ້ຫົວໜ່ວຍທຸລະກິດໃດໜຶ່ງ ເພື່ອຢັ້ງຢືນການດຳເນີນທຸລະກິດຂອງບຸກຄົນ ຫຼື ນິຕິບຸກຄົນ ໃນການດຳເນີນກິດຈະການທຸລະກິດ ທີ່ມີຄວາມສ່ຽງຕໍ່ສິ່ງແວດລ້ອມ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄວາມສະຫງົບປອດໄພ ແລະ ຄວາມໝັ້ນຄົງຂອງຊາດ.

**ມາດຕາ 22 ການນຳໃຊ້ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ເປັນກຳມະສິດຂອງຜູ້ທີ່ໄດ້ຮັບອະນຸຍາດໂດຍກົງຈາກລັດ ແລະ ມີອາຍຸການນຳໃຊ້ຕະຫຼອດໄປ, ແຕ່ໃນທຸກໆປີຕ້ອງໄດ້ຮັບການຢັ້ງຢືນສືບຕໍ່ດຳເນີທຸລະກິດ ໂດຍນັບຈາກວັນທີຢັ້ງຢືນຄັ້ງຫຼ້າສຸດເປັນຕົ້ນໄປ ຕາມຂັ້ນຕອນ ແລະ ກຳນົດເວລາ ທີ່ກຳນົດຢູ່ມາດຕາ 16, 17, 19, ຂໍ້ ຂ ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ທີ່ມີການລະເມີດກົດໝາຍ ຫຼື ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມກົດໝາຍທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ການຢັ້ງຢືນການສືບຕໍ່ດຳເນີນທຸລະກິດ**

ກົມຄຸ້ມຄອງການທ່ອງທ່ຽວ/ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕິດຕາມກວດກາ, ອຳນວຍຄວາມສະດວກ ແລະ ແຈ້ງໃຫ້ຫົວໜ່ວຍທຸລະກິດສະຖານທີ່ພັກແຮມ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນຮັບຊາບ ເພື່ອປະກອບເອກະສານ ແລະ ຍື່ນຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດ ເມື່ອເຖິງກຳນົດເວລາ ໂດຍປະຕິບັດຕາມມາດຕາ 17, 22 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 24 ປ່ອນຍື່ນຄຳຮ້ອງສືບຕໍ່ດຳເນີນທຸລະກິດ

ຫົວໜ່ວຍທຸລະກິດທີ່ມີຈຸດປະສົງຍື່ນຄຳຮ້ອງສືບຕໍ່ດຳເນີນທຸລະກິດຂອງຕົນໃຫ້ປະຕິບັດຕາມມາດຕາ 23 ຂອງຂໍ້ຕົກລົງສະບັບນີ້ ເພື່ອຢັ້ງຢືນການສືບຕໍ່ດຳເນີນທຸລະກິດຂອງຕົນ.

## ໝວດທີ 7

## ການກຳນົດທຶນ ແລະ ທຶນຈົດທະບຽນ

### ມາດຕາ 25 ການກຳນົດທຶນຈົດທະບຽນ

ການກຳນົດທຶນຈົດທະບຽນ ແມ່ນ ເພື່ອກຳນົດຕົວຊີ້ວັດການຈັດລະດັບມາດຕະຖານຂອງສະຖານທີ່ພັກແຮມ ແລະ ການແບ່ງຂັ້ນຄຸ້ມຄອງຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ທຶນຈົດທະບຽນ ຕ້ອງມີຈິງ ໂດຍການຢັ້ງຢືນຂອງທະນາຄານ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຫົວໜ່ວຍທຸລະກິດສະຖານທີ່ພັກແຮມ ແຕ່ລະປະເພດ ແຕ່ລະ ລະດັບ ສາມາດຍົກລະດັບຖານະນິຕິບຸກຄົນຂອງຕົນ ຈາກລະດັບຕໍ່າ ຫາ ລະດັບສູງ ຫຼື ຈາກລະດັບນ້ອຍ ຫາ ລະດັບໃຫຍ່ ຕາມຄວາມສາມາດ ແລະ ເງື່ອນໄຂມາດຕະຖານຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 26 ທຶນຈົດທະບຽນຂອງຫົວໜ່ວຍທຸລະກິດສະຖານທີ່ພັກແຮມ

ຫົວໜ່ວຍທຸລະກິດສະຖານທີ່ພັກແຮມ ແຕ່ລະປະເພດ ຕ້ອງປະກອບທຶນຈົດທະບຽນຂັ້ນຕໍ່າສຸດ ດັ່ງນີ້:

1. ທຸລະກິດພັກແຮມ, ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າ ທີ່ມີຈຳນວນຫ້ອງນອນ 100 ຫ້ອງຂຶ້ນໄປ ຕ້ອງມີທຶນຈົດທະບຽນ 500,000 USD ຂຶ້ນໄປ;
2. ທຸລະກິດພັກແຮມ, ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າ ທີ່ມີຈຳນວນຫ້ອງນອນ 50-99 ຫ້ອງ ຕ້ອງມີທຶນຈົດທະບຽນ 100,000 USD ຂຶ້ນໄປ;
3. ທຸລະກິດພັກແຮມ, ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າ ທີ່ມີຈຳນວນຫ້ອງນອນ 10-49 ຫ້ອງ ຕ້ອງມີທຶນຈົດທະບຽນ 10,000 USD ຂຶ້ນໄປ.
4. ທຸລະກິດພັກແຮມ, ທຸລະກິດຫ້ອງເຊົ່າ ແລະ ເຮືອນເຊົ່າ ທີ່ມີຫ້ອງນອນ 9 ຫ້ອງລົງມາ ລັດ ບໍ່ກຳນົດທຶນຈົດທະບຽນ ແລະ ບໍ່ມີໃບອະນຸຍາດດຳເນີນທຸລະກິດ.

ສຳລັບ ທຶນຈົດທະບຽນ ກິດຈະການເຊົ່າ ຫຼື ສຳປະທານ ຂອງ ບຸກຄົນ ແລະ ນິຕິບຸກຄົນຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍ ການສົ່ງເສີມ ການລົງທຶນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 8

## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ

### ມາດຕາ 27 ສິດຂອງຜູ້ດຳເນີນທຸລະກິດ

ສິດຂອງຜູ້ດຳເນີນທຸລະກິດ ມີດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນທຸລະກິດ ໂດຍບໍ່ຂັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;

2. ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການດຳເນີນທຸລະກິດຂອງຕົນ;
3. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງສິ່ງກໍ່ສ້າງຕ່າງໆ ແລະ ວັດຖຸປະກອນຮັບໃຊ້ໃນທຸລະກິດຂອງຕົນ;
4. ຮ້ອງຂໍຄວາມເປັນທຳຕໍ່ອົງການທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນຖືກອັບປະໂຫຍດ;
5. ສິດໄດ້ຮັບໝາກຜົນ, ສິດໂອນ, ສິດນຳໃຊ້, ສິດຊື້-ຂາຍ;
6. ສິດອື່ນໆ ທີ່ບໍ່ຂັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 28 ພັນທະຂອງຜູ້ດຳເນີນທຸລະກິດ

ພັນທະຂອງຜູ້ດຳເນີນທຸລະກິດ ມີ ດັ່ງນີ້:

1. ຕ້ອງມີປະກັນໄພ, ຖືບັນຊີ, ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ແລະ ທັນເວລາຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ສະແດງລາຄາຫ້ອງພັກ, ອາຫານ ແລະ ການບໍລິການທຸກຢ່າງ ໃຫ້ຈະແຈ້ງ, ມີຈິງ ແລະ ເປັນທຳຕໍ່ຜູ້ໃຊ້ບໍລິການ;
3. ຮັບປະກັນຄວາມສະຫງົບ, ສະອາດ ແລະ ປອດໄພ, ປົກປັກຮັກສາສິ່ງແວດລ້ອມ ຢ່າງຮອບດ້ານ ກ່ຽວກັບການບໍລິການສະຖານທີ່ພັກແຮມ;
4. ແຕ່ງກາຍ, ປຸ່ງຖື ແລະ ເວົ້າຈາສຸພາບຮຽບຮ້ອຍ, ໃຫ້ກຽດ, ເຄົາລົບນັບຖື ໃຫ້ການຮ່ວມມື ແລະ ປະສານງານເປັນຢ່າງດີ ກັບການຈັດຕັ້ງທຸກຂັ້ນ, ອົງການປົກຄອງທ້ອງຖິ່ນ, ບຸກຄົນທີ່ກ່ຽວຂ້ອງ ແລະ ຜູ້ໃຊ້ບໍລິການ;
5. ເປັນເຈົ້າການ ແລະ ໃຫ້ການຮ່ວມມື ຕໍ່ການຈັດລະດັບມາດຕະຖານຂອງສະຖານທີ່ພັກແຮມ, ເຂົ້າສະມາຄົມໂຮງແຮມ, ສະມາຄົມທ່ອງທ່ຽວ ແລະ ການຈັດຕັ້ງທາງສັງຄົມ ເພື່ອສາທາລະນະປະໂຫຍດ;
6. ພັດທະນາ, ສົ່ງເສີມ, ຖ່າຍທອດເຕັກໂນໂລຊີ, ຄວາມຮູ້, ຄວາມສາມາດ, ປະສົບການດ້ານທຸລະກິດ ແລະ ຝຶກອົບຮົມສີມືແຮງງານລາວ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະ ເພດຍິງ ແລະ ປະຊາຊົນລາວ ບັນດາເຜົ່າ;
7. ຕໍ່ໃບຢັ້ງຢືນ ການສືບຕໍ່ດຳເນີນທຸລະກິດບໍລິການສະຖານທີ່ພັກແຮມຕາມກຳນົດເວລາຢ່າງເປັນປົກກະຕິ;
8. ສະຫຼຸບ, ລາຍງານປະຈຳປີ ກ່ຽວກັບການດຳເນີນທຸລະກິດຂອງຕົນ ແລະ ປະກົດການຫຍໍ້ທໍ້ທາງສັງຄົມ ທີ່ເກີດຂຶ້ນຢູ່ໃນຂົງເຂດວຽກງານສະຖານທີ່ພັກແຮມ ຢ່າງເປັນປົກກະຕິ, ທັນການ ຕໍ່ເຈົ້າໜ້າທີ່, ກົມຄຸ້ມຄອງການທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
9. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 9

## ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ

### ມາດຕາ 29 ສິດຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີສິດ ດັ່ງນີ້:

1. ເລືອກໃຊ້ບໍລິການສະຖານທີ່ພັກແຮມ ຕາມຄວາມຕ້ອງການ, ໄດ້ຮັບການບໍລິການທີ່ມີຄຸນນະພາບ ຕາມລະດັບມາດຕະຖານຂອງສະຖານທີ່ພັກແຮມ ເປັນຢ່າງດີ;

2. ເຂົ້າເຖິງຂໍ້ມູນ, ລາຍການພັກແຮມ, ລາຄາພັກແຮມ ແລະ ການບໍລິການ ຢ່າງຖືກຕ້ອງ ແລະ ເປັນທຳ;
3. ຮຽກຮ້ອງຄວາມເປັນທຳ ເມື່ອເຫັນວ່າຕົນຖືກສໍ້ໂກງ ເອົາປຽບ ຫຼື ອັບປະໂຫຍດ;
4. ແຈ້ງຕໍ່ເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເມື່ອພົບເຫັນສະພາບ ຫຼື ປະກົດການຫຍໍ້ຂອງສັງຄົມ;
5. ສິດອື່ນໆ ທີ່ບໍ່ຂັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 30 ພັນທະຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການສະຖານທີ່ພັກແຮມ ມີພັນທະ ດັ່ງນີ້:

1. ຕ້ອງມີປະກັນໄພ, ຈ່າຍຄ່າຫ້ອງພັກ ແລະ ຄ່າບໍລິການອື່ນຢ່າງຖືກຕ້ອງຕາມລາຍການ ແລະ ລາຄາຕົວຈິງ;
2. ແຕ່ງກາຍ, ນຸ່ງຖື, ເວົ້າຈາ, ມີພຶດຕິກຳສຸພາບຮຽບຮ້ອຍ, ເຄົາລົບນັບຖື, ໃຫ້ກຽດຜູ້ໃຫ້ບໍລິການ, ພະນັກງານ, ເຈົ້າໜ້າທີ່ ການຈັດຕັ້ງ ແລະ ບຸກຄົນທົ່ວໄປ ທີ່ກ່ຽວຂ້ອງ;
3. ປົກປັກຮັກສາຄວາມສະອາດ, ສະພາບແວດລ້ອມ ແລະ ບັນຍາກາດທີ່ດີ;
4. ລາຍງານເຈົ້າໜ້າທີ່ ແລະ ການຈັດຕັ້ງ ເມື່ອພົບເຫັນເຫດການ ຫຼື ປະກົດການຫຍໍ້ທໍ້ຂອງສັງຄົມ;
5. ປະຕິບັດພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 10
## ການໂຈະ, ການຍົກເລີກ ແລະ ສິ້ນສຸດການດຳເນີນທຸລະກິດ

### ມາດຕາ 31 ການໂຈະການດຳເນີນທຸລະກິດ

ການດຳເນີນທຸລະກິດ ຈະຖືກໂຈະການເຄື່ອນໄຫວຊົ່ວຄາວ ໂດຍຂະແໜງການທີ່ອະນຸຍາດດຳເນີນທຸລະກິດ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ ຫຼື ຜູ້ຖືກຜົນກະທົບ;
2. ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຍ້ອນບໍ່ປະຕິບັດຕາມເປົ້າໝາຍ ການດຳເນີນທຸລະກິດ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ຕາມຄຳຕັດສິນຂອງສານ.

### ມາດຕາ 32 ຂັ້ນຕອນການໂຈະການດຳເນີນທຸລະກິດ

ການໂຈະ ຕາມການສະເໜີຂອງປະຊາຊົນ ຫຼື ຜູ້ຖືກຜົນກະທົບ ແມ່ນ ກົມກອງ, ພະແນກການ, ຫ້ອງການທີ່ອະນຸຍາດດຳເນີນທຸລະກິດ ແລະ ອອກໃບທະບຽນວິສາຫະກິດ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາປະເມີນຜົນ ແລະ ພິສູດຫຼັກຖານ ກ່ອນການພິຈາລະນາອະນຸຍາດໃຫ້ໂຈະ ແລະ ແຈ້ງເຕືອນເປັນລາຍລັກອັກສອນ ໂດຍມີກຳນົດເວລາ ເພື່ອໃຫ້ຜູ້ດຳເນີນທຸລະກິດ ແກ້ໄຂ ຫຼື ປັບປຸງໃຫ້ຖືກຕ້ອງ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ຕາມກຳນົດເວລາ ທີ່ໄດ້ຕົກລົງກັນ, ການດຳເນີນທຸລະກິດ ດັ່ງກ່າວ ກໍຈະຖືກສັ່ງໃຫ້ໂຈະ ພາຍໃນ 3 ວັນລັດຖະການ ນັບແຕ່ມື້ແຈ້ງເຕືອນເປັນລາຍລັກອັກສອນ ເປັນຕົ້ນໄປ ບົນພື້ນຖານການເຫັນດີຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ການໂຈະ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ແມ່ນ ກົມກອງ, ພະແນກການ, ຫ້ອງການທີ່ອະນຸຍາດດຳເນີນທຸລະກິດ ແລະ ອອກທະບຽນວິສາຫະກິດ ເປັນຜູ້ດຳເນີນການ ຕາມຂັ້ນຕອນ ແລະ ກຳນົດເວລາ ດຽວກັນກັບການໂຈະ ຕາມການສະເໜີຂອງປະຊາຊົນ ດັ່ງກ່າວ ຂ້າງເທິງນີ້.

ການໂຈະ ຕາມຄຳຕັດສິນຂອງສານ ແມ່ນ ກົມກອງ, ພະແນກການ, ຫ້ອງການທີ່ອະນຸຍາດດຳເນີທຸລະກິດ ແລະ ອອກໃບທະບຽນວິສາຫະກິດ, ເຈົ້າໜ້າທີ່ຕຳຫຼວດ ແລະ ຂະແໜງການທີ່ກ່ຽວຂ້ອງ ປະສານສົມທົບກັນ ຈັດຕັ້ງ

ປະຕິບັດຕາມຄຳຕັດສິນຂອງສານ.

**ມາດຕາ 33 ການຍົກເລີກການດຳເນີນທຸລະກິດ**

ຫົວໜ່ວຍທຸລະກິດບໍລິການສະຖານທີ່ຝາກແຮມ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນທຸລະກິດ ຫຼື ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງ ຕາມທີ່ໄດ້ກຳນົດໄວ້ສັນຍາ ຫຼື ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ບໍ່ສາມາດແກ້ໄຂຕາມທີ່ລະບຸຢູ່ໃນມາດຕາ 32 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ເສຍພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;
4. ຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍົກເລີກການດຳເນີນທຸລະກິດ;
5. ທຸລະກິດລົ້ມລະລາຍ ຕາມກົດໝາຍ ການຍົກເລີກການດຳເນີນທຸລະກິດ ຈະບໍ່ພາໃຫ້ຜູ້ດຳເນີນທຸລະກິດພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ພາກລັດ.

**ມາດຕາ 34 ຂັ້ນຕອນການຍົກເລີກການດຳເນີນທຸລະກິດ**

ຂັ້ນຕອນການຍົກເລີກການດຳເນີນທຸລະກິດ ມີດັ່ງນີ້:

1. ກົມກອງ, ພະແນກການ, ຫ້ອງການ ທີ່ອະນຸຍາດດຳເນີນທຸລະກິດ ເປັນຜູ້ອອກໜັງສືແຈ້ງຍົກເລີກການດຳເນີນທຸລະກິດ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການຕົກລົງເຫັນດີຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ໃຫ້ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນໃຫ້ແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

**ມາດຕາ 35 ການສິ້ນສຸດການດຳເນີນທຸລະກິດ**

ການດຳເນີນທຸລະກິດ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ຖືກຖອນໃບອະນຸຍາດດຳເນີນທຸລະກິດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະຂໍ້ຕົກລົງສະບັບນີ້;
3. ຕາມຄຳຕັດສິນຂອງສານ.

## ໝວດທີ 11
## ຂໍ້ຫ້າມ

**ມາດຕາ 36 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຕ້ານ ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ນະໂຍບາຍສົ່ງເສີມການດຳເນີນທຸລະກິດດ້ານການທ່ອງທ່ຽວ ຂອງ ລັດ;
2. ອະນຸຍາດ, ດຳເນີນທຸລະກິດ ທີ່ກົດໝາຍ ແລະ ລະບຽບການ ເກືອດຫ້າມ;
3. ຂັດຂວາງການພັດທະນາ ແລະ ການດຳເນີນທຸລະກິດ ໃນຂົງເຂດທີ່ ລັດ ມີນະໂຍບາຍ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 37 ຂໍ້ຫ້າມສຳລັບພະນັກງານລັດ**

ຫ້າມພະນັກງານລັດ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຈາກທຸລະກິດບໍລິການສະຖານທີ່ພັກແຮມ;
2. ສົມຮູ້ຮ່ວມຄິດ ຫຼື ອຳນວຍຄວາມສະດວກໃຫ້ທຸລະກິດ, ຜູ້ປະກອບການທຸລະກິດບໍລິການສະຖານທີ່ພັກແຮມ ຫຼື ຜູ້ມີສ່ວນກ່ຽວຂ້ອງ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
3. ຮັບສິນບົນຈາກຜູ້ດຳເນີນທຸລະກິດ ຫຼື ຜູ້ມີສ່ວນກ່ຽວຂ້ອງກັບທຸລະກິດບໍລິການສະຖານທີ່ພັກແຮມ;
4. ເປີດເຜີຍຄວາມລັບຂອງຊາດ, ຂອງລັດ ແລະ ຂອງຜູ້ດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ;
5. ຂັດຂວາງ, ແກ່ຍາວເວລາ, ກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ດຳເນີນທຸລະກິດ ໂດຍຂາດເຫດຜົນທາງດ້ານກົດໝາຍ ແລະ ລະບຽບການ;
6. ມີພຶດຕິກຳອື່ນ ທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 38 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ

ຫ້າມຜູ້ດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ມີພຶດຕິກຳ ດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ ແລະ ບຸກຄົນ ທີ່ຮັບຜິດຊອບໂດຍກົງ ຫຼື ວຽກງານທີ່ກ່ຽວຂ້ອງ;
2. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່, ພະນັກງານລັດ ແລະ ບຸກຄົນ ເພື່ອຫາຜົນປະໂຫຍດ ທີ່ຂັດກົດໝາຍ ແລະ ລະບຽບການ;
3. ດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ ຫຼື ນຳໃຊ້ໃບອະນຸຍາດດຳເນີນທຸລະກິດ ຫຼື ເອກະສານທາງການໄປໃນທາງທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ;
4. ນຳໃຊ້ສະຖານທີ່ພັກແຮມ ເປັນບ່ອນພັກອາໄສຜູ້ກໍ່ການຮ້າຍ, ເກັບ, ຈຳໜ່າຍ, ຄ້າຂາຍ, ບໍລິການ, ເສບ, ມົ້ວສຸມສິ່ງເສບຕິດ, ການພະນັນ, ຂອງເຖື່ອນ, ໂສເພນີ, ຄ້າມະນຸດ, ອາວຸດ, ແຮງງານເຖື່ອນ, ແຮງງານເດັກອາຍຸບໍ່ເຖິງກະສຽນ ແລະ ສິ່ງຜິດກົດໝາຍ ທຸກຊະນິດ;
5. ສ້າງບັນຫາຜົນກະທົບ ດ້ານ ສິ່ງແວດລ້ອມ, ຄວາມສະຫງົບ, ຄວາມປອດໄພ, ສຽງເອື້ອງນັນ, ມົນລະພິດທາງອາກາດ, ນ້ຳເປື້ອນ, ກິ່ນເໝັນ, ກີດຂວາງການສັນຈອນຕາມຖະໜົນສາທາລະນະ, ກໍ່ຄວາມວຸ້ນວາຍອາລະວາດຕີກັນ;
6. ແຕ່ງກາຍ, ນຸ່ງຖືບໍ່ສຸພາບ, ໂປ້ເປືອຍ, ສະແດງ, ໂຊ ພາບໂປ້ເປືອຍ ລາມົກອານາຈານ;
7. ບໍລິການບໍ່ມີຄຸນນະພາບ, ສໍ້ໂກງລາຄາ, ໂຄສະນາບິດເບືອນຄວາມຈິງ, ໃສ່ຮ້າຍປ້າຍສີບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ພັກ, ລັດ, ຂັດຂວາງການປະຕິບັດໜ້າທີ່ຂອງການຈັດຕັ້ງລັດ, ເຈົ້າໜ້າທີ່ ຫຼື ພະນັກງານລັດ ແລະ ພຶດຕິກຳອື່ນ ທີ່ຂັດກົດໝາຍ ແລະ ລະບຽບການ.

## ໝວດທີ 12
## ການແກ້ໄຂ ຂໍ້ຂັດແຍ່ງ

### ມາດຕາ 39 ຮູບການແກ້ໄຂຂໍ້ຂັດແຍ່ງ

ຮູບການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ມີດັ່ງນີ້:

1. ການແກ້ໄຂ ດ້ວຍການປະນີປະນອມກັນ;
2. ການແກ້ໄຂ ທາງບໍລິຫານ;
3. ການແກ້ໄຂ ໂດຍສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ.

**ມາດຕາ 40 ການແກ້ໄຂດ້ວຍການປະນີປະນອມ**

ໃນກໍລະນີ ທີ່ມີຂໍ້ຂັດແຍ່ງກ່ຽວກັບການເຄື່ອນໄຫວດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຫຼືຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບວຽກງານທຸລະກິດພັກແຮມ ຄູ່ກໍລະນີຕ້ອງດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນໂດຍສັນຕິວິທີ, ປະນີປະນອມກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 41 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງ ຕ້ອງສະເໜີຂໍ້ຂັດແຍ່ງຕໍ່ ກົມຄຸ້ມຄອງການທ່ອງທ່ຽວ/ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 42 ການແກ້ໄຂໂດຍ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຄູ່ກໍລະນີສາມາດຮ້ອງຂໍຕໍ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ເພື່ອພິຈາລະນາແກ້ໄຂຕາມຂະບວນການຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 43 ການຮ້ອງຟ້ອງຕໍ່ສານ ສປປ ລາວ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ຕາມກົດໝາຍ ຂອງ ສປປ ລາວ. ເມື່ອມີຄຳຕັດສິນຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ມີຜົນສັກສິດບັງຄັບປະຕິບັດຕໍ່ຄູ່ກໍລະນີ.

## ໝວດທີ 13
## ການຈັດຕັ້ງປະຕິບັດ ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 44 ການປະຕິບັດຄ່າທຳນຽມ ແລະ ຄ່າບໍລິການ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຢູ່ ສປປ ລາວ ຕ້ອງເສຍຄ່າທຳນຽມ ແລະ ຄ່າບໍລິການຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງຕາມກຳນົດເວລາ ຢ່າງເປັນປົກກະຕິ.

**ມາດຕາ 45 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ພະນັກງານການເງິນ ເກັບຄ່າທຳນຽມ ແລະ ຄ່າບໍລິການທຸລະກິດບໍລິການສະຖານທີ່ພັກແຮມ ໃນຂອບເຂດທົ່ວປະເທດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການເງິນ ເປັນລາຍລັກອັກສອນ. ການເກັບ ຕ້ອງຈົດຮັບ, ຈົດຈ່າຍພ້ອມທັງອອກໃບເກັບເງິນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ຜູ້ຈ່າຍເງິນ ຕ້ອງທວງເອົາໃບເກັບເງິນ ຫຼື ໃບບິນຮັບເງິນຂອງຂະແໜງການເງິນ ຢ່າງຖືກຕ້ອງ ເພື່ອເປັນຫຼັກຖານຢັ້ງຢືນການຈ່າຍ.

**ມາດຕາ 46 ການເກັບຮັກສາ ລາຍຮັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ**

ລາຍຮັບທັງໝົດທີ່ເກັບໄດ້ຈາກຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ຕ້ອງໂອນເຂົ້າບັນຊີເງິນຝາກຂອງກອງທຶນການທ່ອງທ່ຽວ ໂດຍປະຕິບັດຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ກອງທຶນການທ່ອງທ່ຽວ.

# ໝວດທີ 14
## ການຄຸ້ມຄອງທຸລະກິດສະຖານທີ່ພັກແຮມ

**ມາດຕາ 47 ອົງການຄຸ້ມຄອງ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຄຸ້ມຄອງວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມຄຸ້ມຄອງການທ່ອງທ່ຽວ ເປັນເສນາທິການໃຫ້ກະຊວງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ, ຂະແໜງສາທາລະ ນະສຸກ, ຂະແໜງປ້ອງກັນຄວາມສະຫງົບ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງສິ່ງແວດລ້ອມ, ຂະແໜງ ການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານທຸລະກິດສະຖານທີ່ພັກແຮມ ຢູ່ ສປປ ລາວ.

**ມາດຕາ 48 ສິດ ແລະ ໜ້າທີ່ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນອກຈາກປະຕິບັດສິດ ແລະ ໜ້າທີ່ ຕາມກົດໝາຍ ແລ້ວ ຍັງມີສິດ ແລະ ໜ້າທີ່ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ກ. ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ :**

1. ຄົ້ນຄວ້າ, ສ້າງ ແລະ ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງວຽກງານສະຖານທີ່ພັກແຮມ ຢູ່ ສປປ ລາວ;
2. ຄົ້ນຄວ້າການສ້າງລະບົບອີເຫຼັກໂທຣນິກ ໃຫ້ເຊື່ອມໂຍງກັບຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງລົງທຶນ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ, ເຂດເສດຖະກິດສະເພາະ ແລະ ຫ້ອງການຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢູ່ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອເຊື່ອມໂຍງດ້ານຂໍ້ມູນຂ່າວສານ, ການຄົ້ນຄວ້າພິ ຈາລະນາການລົງທຶນ, ຂຶ້ນທະບຽນວິສາຫະກິດ, ການອະນຸຍາດການສືບຕໍ່ດຳເນີນທຸລະກິດ ແລະວຽກງານຄຸ້ມຄອງຕິດຕາມກວດກາຫົວໜ່ວຍທຸລະກິດ ໃນຂອບເຂດທົ່ວປະເທດ;
3. ໂຄສະນາ ແລະ ປະກາດໃຊ້ບັນດາແບບພິມ ຫຼື ແບບຟອມ ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ, ເງື່ອນໄຂມາດຕະຖານ, ຂັ້ນຕອນ ແລະ ຂະບວນການອະນຸຍາດດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຢູ່ ສປປ ລາວ;
4. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາ ແລະ ການຮັບຮອງບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບ ການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຢູ່ ສປປ ລາວ ໃນກໍລະນີເປັນຫົວໜ່ວຍທຸລະກິດຂອງໂຄງການລົງທຶນພັດທະນາແຫຼ່ງທ່ອງທ່ຽວ;
5. ຄົ້ນຄວ້າ ແລະ ນຳສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກໂຄງການ, ກິດຈະການ ການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມທີ່ບໍ່ປະຕິບັດຕາມເປົ້າໝາຍການດຳເນີນທຸລະກິດ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນ ຂ່າວສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການດຳເນີນທຸລະກິດ ເພື່ອດຶງດູດນັກລົງທຶນ, ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ;
7. ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍກ່ຽວກັບທຸລະກິດບໍລິການສະຖານທີ່ພັກແຮມ ແລະ ທຸລະກິດຂົງເຂດການທ່ອງທ່ຽວ ຢູ່ ສປປ ລາວ;
8. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການ

ປະເມີນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນກັບບັນດາໂຄງການ, ກິດຈະການ, ການດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດ ລວມທັງການຄຸ້ມຄອງຜູ້ປະກອບການທຸລະກິດ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ຊີ້ນຳ ແລະ ອຳນວຍຄວາມສະດວກ ໃນການບໍລິການ, ການດຳເນີນທຸລະກິດ ໃຫ້ເຂົ້າສູ່ລະບົບປະຕູດຽວ ເພື່ອຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງ ແລະ ມີປະສິດທິຜົນ;

10. ຝຶກອົບຮົມ, ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມ, ຄຸ້ມຄອງ ແລະ ການບໍລິການ ດ້ານການພັກແຮມ ຫຼື ທຸລະກິດບໍລິການສະຖານທີ່ພັກແຮມ ໃຫ້ມີຄວາມສະດວກ, ມີຄຸນນະພາບ, ມາດຕະຖານ, ສະອາດ ແລະ ປອດໄພ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງສະຖານທີ່ພັກແຮມ;

12. ສະຫຼຸບ ແລະ ລາຍງານວຽກງານ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

13. ກຳນົດເງື່ອນໄຂ, ມາດຕະຖານ ແລະ ມາດຕະການ ກ່ຽວກັບ ສະຖານທີ່ພັກແຮມ ໃນຂອບເຂດທົ່ວປະເທດ;

14. ຜັນຂະຫຍາຍແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບວຽກງານທຸລະກິດບໍລິການສະຖານທີ່ພັກແຮມ;

15. ສ້າງແຜນການ, ແຜນງານ, ໂຄງການ ແລະ ການຈັດຕັ້ງປະຕິບັດ ຕິດພັນກັບການປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພ ຢ່າງຮອບດ້ານ;

16. ໂຄສະນາສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ແຜນການ, ໂຄງການ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ທຸລະກິດບໍລິການສະຖານທີ່ພັກແຮມ;

17. ຄົ້ນຄວ້າ, ເຜີຍແຜ່, ແນະນຳວຽກງານ ທຸລະກິດບໍລິການສະຖານທີ່ພັກແຮມ ໃຫ້ດຳເນີນໄປຢ່າງມີປະສິດທິພາບ, ມີປະສິດທິຜົນ ຕິດພັນກັບວຽກງານໂຄສະນາເຜີຍແຜ່ ສິລະປະ, ວັດທະນະທຳ ແລະ ປະເພນີທີ່ດີງາມຂອງຊາດ;

18. ປະສານສົມທົບກັບ ຂະແໜງສາທາລະນະສຸກ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ຕິດຕາມກວດກາການຈັດຕັ້ງ ແລະ ການ ເຄື່ອນໄຫວຂອງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນຄວາມສະຫງົບ, ສະອາດ ແລະ ປອດໄພ;

19. ຝຶກອົບຮົມ, ຍົກລະດັບປັບປຸງ, ຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂົງເຂດວຽກງານການພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດ ໃນແຕ່ລະດ້ານ ໃຫ້ມີຄຸນນະພາບ ແລະ ມາດຕະຖານ;

20. ຊີ້ນຳນຳພາ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ຢູ່ຂັ້ນທ້ອງຖິ່ນ;

21. ຄົ້ນຄວ້າ, ພິຈາລະນາ, ອະນຸມັດການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຕາມການແບ່ງຂັ້ນຄຸ້ມຄອງ;

22. ຄົ້ນຄວ້າ, ພິຈາລະນາ ການຕໍ່ໃບອະນຸຍາດດຳເນີນທຸລະກິດ, ການຍ້ອງຍໍຊົມເຊີຍ ແລະ ການຢັ້ງຢືນອື່ນໆ ຂອງຫົວໜ່ວຍທຸລະກິດ;

23. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ພິຈາລະນາ ການຕັກເຕືອນ, ການປັບໃໝ, ການໂຈະ, ການຍຸບເລີກຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມທົ່ວປະເທດ ທີ່ເຄື່ອນໄຫວບໍ່ຖືກຕ້ອງ;

24. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຂ. ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ :**

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ;
2. ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນ ຂ່າວສານ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມ ແລະ ຄຸ້ມຄອງການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ເພື່ອດຶງດູດນັກລົງທຶນ ແລະ ນັກທ່ອງທ່ຽວ ຕາມຄວາມຮັບຜິດຊອບ ໃນຂັ້ນທ້ອງຖິ່ນຂອງຕົນ;
3. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາ, ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ແລະ ຕາງໜ້າໃຫ້ແຂວງ ລົງນາມໃນສັນຍາ, ບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກຂອງໂຄງການກ່ຽວກັບວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
4. ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ລວມທັງ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ;
5. ປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ, ການແກ້ໄຂບັນຫາຕ່າງໆ ປະກົດການຫຍໍ້ທໍ້ໃນບັນດາໂຄງການ, ກິດຈະການທຸລະກິດບໍລິການສະຖານທີ່ພັກແຮມໃນທ້ອງຖິ່ນຂອງຕົນ;
6. ຄົ້ນຄວ້າ ແລະ ນຳສະເໜີ ການໂຈະ, ປ່ຽນແປງ ຫຼື ຍົກເລີກ ໂຄງການ ຫຼື ກິດຈະການທຸລະກິດບໍລິການສະຖານທີ່ພັກແຮມ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດຳເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;
7. ອຳນວຍຄວາມສະດວກ ໃນການດຳເນີນທຸລະກິດຂອງຜູ້ລົງທຶນ ຫຼື ການດຳເນີນການ ການບໍລິການລົງທຶນປະຕູດຽວ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງ ແລະ ມີປະສິດທິຜົນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ ຕາມການມອບໝາຍຂອງຂັ້ນເທິງ;
9. ຝຶກອົບຮົມ, ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມ ແລະ ການຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ;
10. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານພັດທະນາ, ສົ່ງເສີມ ແລະ ການຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
11. ຈັດຕັ້ງປະຕິບັດຕາມແນວທາງນະໂຍບາຍ, ລະບຽບ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ໂຄງການ, ມາດຕະຖານ, ເງື່ອນໄຂ, ການພັດທະນາ ແລະ ການຄຸ້ມຄອງກ່ຽວກັບວຽກງານບໍລິການສະຖານທີ່ພັກແຮມ ທີ່ລັດຖະບານວາງອອກ;
12. ຄົ້ນຄວ້າແຜນຍຸດທະສາດ, ແຜນການ, ໂຄງການ ແລະ ລະບຽບການພັດທະນາ ແລະ ການຄຸ້ມຄອງສະຖານທີ່ພັກແຮມ;
13. ປະສານສົມທົບກັບຂະແໜງສາທາລະນະສຸກ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງອື່ນທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວຕິດຕາມກວດກາວຽກງານບໍລິການສະຖານທີ່ພັກແຮມ ທີ່ຂຶ້ນນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍສະຫງົບ ແລະ ປອດໄພ ຮອບດ້ານ;
14. ຄົ້ນຄວ້າ, ພິຈາລະນາ, ການຕໍ່ໃບອະນຸຍາດ, ການຍ້ອງຍໍຊົມເຊີຍ, ການຕັກເຕືອນ, ການປັບໃໝ, ການໂຈະ, ການຍຸບເລີກການດຳເ, ນີນທຸລະກິດບໍລິການສະຖານທີ່ພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

15. ເກັບກຳສະຖິຕິ, ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມຢູ່ພາຍໃນຂອບເຂດແຂວງ/ນະຄອນຫຼວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ 3 ເດືອນ, 6 ເດືອນ ແລະ 1 ປີ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານຂັ້ນເທິງຊາບ ແລະ ມີວິທີການແກ້ໄຂຢ່າງທັນການ;
16. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືທີ່ດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ;
17. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ສາມາດຂອງບຸກຄະລາກອນ ໃນຂົງເຂດວຽກງານບໍລິການສະຖານທີ່ພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດໃນແຕ່ລະດ້ານ ໃຫ້ມີຄຸນນະພາບ ແລະ ມາດຕະຖານ;
18. ຊີ້ນຳ, ນຳພາຫ້ອງການທ່ອງທ່ຽວເມືອງ/ນະຄອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ:**

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ຄຳສັ່ງ, ແຜນການ, ໂຄງການ, ການພັດທະນາ, ການຄຸ້ມຄອງ ແລະ ມາດຕະຖານ ກ່ຽວກັບວຽກງານບໍລິການສະຖານທີ່ພັກແຮມໃນຂອບເຂດທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ, ສ້າງແຜນການ, ໂຄງການກ່ຽວກັບການຈັດຕັ້ງ ການເຄື່ອນໄຫວວຽກງານບໍລິການສະຖານທີ່ພັກແຮມ;
3. ຄົ້ນຄວ້າ, ພິຈາລະນາ, ອະນຸມັດ ການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຕາມການແບ່ງຂັ້ນຄຸ້ມຄອງ;
4. ຄົ້ນຄວ້າ, ພິຈາລະນາການຕໍ່ໃບອະນຸຍາດ, ການຍ້ອງຍໍຊົມເຊີຍ, ການຕັກເຕືອນ, ການປັບໃໝ, ການໂຈະ ແລະ ການຍຸບເລີກຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
5. ປະສານສົມທົບກັບຫ້ອງການເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ, ຫ້ອງການປົກຄອງບ້ານ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວຕິດຕາມກວດກາວຽກງານບໍລິການສະຖານທີ່ພັກແຮມທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ ແລະ ມີຄວາມປອດໄພ ຢ່າງຮອບດ້ານ;
6. ເກັບກຳສະຖິຕິ, ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານກ່ຽວກັບການບໍລິການສະຖານທີ່ພັກແຮມທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ຂັ້ນເທິງຂອງຕົນຊາບຢ່າງເປັນປົກກະຕິ 3 ເດືອນ, 6 ເດືອນ ແລະ 1 ປີ. ກໍລະນີຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານຂັ້ນເທິງຂອງຕົນຊາບ ແລະ ມີວິທີການແກ້ໄຂ ຢ່າງທັນການ;
7. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືຢ່າງດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງ ທີ່ຕົນຂຶ້ນກັບ;
8. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ຄວາມສາມາດ ຂອງບຸກຄະລາກອນໃນຂົງເຂດວຽກງານບໍລິການສະຖານທີ່ພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດໃນແຕ່ລະດ້ານ ໃຫ້ມີຄຸນນະພາບ ແລະ ມາດຕະຖານ;
9. ຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ, ກິດຈະການ ລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນ ແລະ ການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ຕາມຄວາມຮັບຜິດຊອບຂອງຕົນ;

10. ປະສານສົມທົບກັບບັນດາຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ແກ້ໄຂບັນຫາຕ່າງໆ ຫຼື ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນບັນດາໂຄງການ ແລະ ກິດຈະການ ທຸລະກິດບໍລິການສະຖານທີ່ພັກແຮມ;
11. ອໍານວຍຄວາມສະດວກ, ສະໜັບສະໜູນການເຄື່ອນໄຫວວຽກງານການບໍລິການ ການລົງທຶນປະຕູດຽວ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ມີປະສິດທິຜົນ ຕາມຄວາມຮັບຜິດຂອງຕົນ;
12. ສະເໜີການສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ;
13. ສະຫຼຸບ, ລາຍງານກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 49 ຄວາມຮັບຜິດຊອບຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ຄໍາສັ່ງ, ແຜນຍຸດທະສາດ, ແຜນການໂຄງການ, ການພັດທະນາ, ການຄຸ້ມຄອງ ແລະ ມາດຕະຖານກ່ຽວກັບວຽກງານບໍລິການສະຖານທີ່ພັກແຮມ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.
2. ໃຫ້ການຮ່ວມມືທີ່ດີ ຕໍ່ກັບຂະແໜງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວເມືອງ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕິດຕາມກວດກາ ແລະ ອໍານວຍຄວາມສະດວກກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວດໍາເນີນທຸລະກິດບໍລິການສະຖານທີ່ພັກແຮມ ພາຍໃນຂອບເຂດບ້ານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.
3. ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານບໍລິການສະຖານທີ່ພັກແຮມ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຊາບຢ່າງເປັນປົກກະຕິ. ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ຕ້ອງລາຍງານຂັ້ນເທິງຂອງຕົນຊາບ ແລະ ມີວິທີການແກ້ໄຂຢ່າງທັນການ.
4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 ຄວາມຮັບຜິດຊອບຂອງຂະແໜງການອື່ນ**

ຂະແໜງການອື່ນ ມີໜ້າທີ່ໃນການຈັດຕັ້ງປະຕິບັດ, ອໍານວຍຄວາມສະດວກ, ໃຫ້ການຮ່ວມມືທີ່ດີ ໃນການຄຸ້ມຄອງຕິດຕາມກວດກາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 15
## ຈຸດປະສົງ ແລະ ການແບ່ງຂັ້ນຄຸ້ມຄອງ

**ມາດຕາ 51 ຈຸດປະສົງການແບ່ງຂັ້ນຄຸ້ມຄອງ**

ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງລັດ ທັງເປັນການກະຈາຍອໍານາດລົງສູ່ທ້ອງຖິ່ນ ທີ່ມີຄວາມພ້ອມ ແລະ ການສ້າງສິ່ງອໍານວຍຄວາມສະດວກໃຫ້ກັບພາກທຸລະກິດ ຕາມນະໂຍບາຍສົ່ງເສີມການລົງທຶນຜ່ານລະບົບປະຕູດຽວ ແລະ ການອະນຸຍາດດໍາເນີນທຸລະກິດຂອງຂະແໜງການ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສ. ການຄຸ້ມຄອງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ຈຶ່ງມີຄວາມຈໍາເປັນ ໃນການ

ຊຸກຍູ້ສົ່ງເສີມ ແລະ ເສີມຂະຫຍາຍຈຸດບໍລິການໃຫ້ກັບພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຢ່າງທົ່ວເຖິງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 52 ການຄຸ້ມຄອງ**

ຂັ້ນສູນກາງ ມອບໃຫ້ກົມຄຸ້ມຄອງການທ່ອງທ່ຽວ ເປັນເສນາທິການໃຫ້ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງ ແລະ ຕິດຕາມກວດກາບັນດາຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທຸກປະເພດ ທຸກລະດັບ ທັງເປັນເຈົ້າການຄົ້ນຄວ້າພິຈາລະນາ ອະນຸມັດການດຳເນີນທຸລະກິດ ແລະ ການອະນຸຍາດການສືບຕໍ່ດຳເນີນທຸລະກິດ ຂອງຫົວໜ່ວຍທຸລະກິດ ບໍລິການ ສະຖານທີ່ພັກແຮມ ທຸກປະເພດ ທີ່ມີທຶນຈົດທະບຽນ 500,000 USD ຂຶ້ນໄປ ໂດຍປະຕິບັດຕາມຂັ້ນຕອນ ແລະ ເງື່ອນໄຂຂອງຂໍ້ຕົກລົງສະບັບນີ້ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບແໜ້ນກັບພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 53 ການຄຸ້ມຄອງຫົວໜ່ວຍທຸລະກິດສະຖານທີ່ພັກແຮມ ຂັ້ນທ້ອງຖິ່ນ**

ຂັ້ນທ້ອງຖິ່ນ ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ເປັນເສນາທິການໃຫ້ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າເມືອງ ແລະ ເຈົ້ານະຄອນ ທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ຕິດຕາມກວດກາຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ທັງເປັນເຈົ້າການຄົ້ນຄວ້າພິຈາລະນາອະນຸມັດການດຳເນີນທຸລະກິດ ແລະ ການອະນຸຍາດການສືບຕໍ່ດຳເນີນທຸລະກິດຂອງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ແຕ່ລະປະເພດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບແໜ້ນ ກັບພາກສ່ວນທີ່ກ່ຽວຂ້ອງ ລວມທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ ດັ່ງນີ້:

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ ຮັບຜິດຊອບຕໍ່ຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ແຕ່ລະປະເພດ ທີ່ຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ມີທຶນຈົດທະບຽນ 100,000 USD ຂຶ້ນໄປ ແລະ ຕໍ່າກວ່າ 500,000 USD ລົງມາ ໂດຍປະຕິບັດຕາມຂັ້ນຕອນ ແລະ ເງື່ອນໄຂດຽວກັນກັບຂັ້ນສູນກາງ.

ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ຮັບຜິດຊອບຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມ ແຕ່ລະປະເພດ ທີ່ຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ມີທຶນຈົດທະບຽນຕໍ່າກວ່າ 100,000 USD ລົງມາ ລວມທັງຫົວໜ່ວຍທຸລະກິດບໍລິການສະຖານທີ່ພັກແຮມຂະໜາດນ້ອຍທີ່ ລັດ ບໍ່ກຳນົດທຶນຈົດທະບຽນ ໂດຍປະຕິບັດຕາມຂັ້ນຕອນ ແລະ ເງື່ອນໄຂດຽວກັນກັບຂັ້ນພະແນກ.

ການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບການແບ່ງຂັ້ນຄຸ້ມຄອງຢູ່ຂັ້ນທ້ອງຖິ່ນ ສະເພາະເມືອງ ຢູ່ເຂດຫ່າງໄກສອກຫຼີກ ຫຼື ຂາດຄວາມພ້ອມ ແມ່ນມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ ທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາຕາມເງື່ອນໄຂ ແລະ ທ່າແຮງຄວາມສາມາດຂອງແຕ່ລະທ້ອງຖິ່ນ.

## ໝວດທີ 16

## ການກວດກາວຽກງານທຸລະກິດບໍລິການສະຖານທີ່ພັກແຮມ

**ມາດຕາ 54 ອົງການກວດກາ**

ອົງການກວດກາວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານທຸລະກິດບໍລິການສະຖານທີ່ພັກແຮມ ຕາມທີ່ໄດ້ກຳນົດ ຢູ່ ມາດຕາ 47 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກຊຶ່ງແມ່ນສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ກວດສອບຕາມພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3. ກົມຄຸ້ມຄອງການທ່ອງທ່ຽວ ສົມທົບກັບ ຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນ ແລະ ທ້ອງຖິ່ນ ໃນການຕິດຕາມ, ກວດກາການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ໃນຂອບເຂດທົ່ວປະເທດ.

**ມາດຕາ 55 ເນື້ອໃນການກວດກາ**

ທຸກການເຄື່ອນໄຫວຂອງບັນດາກິດຈະການ ການດຳເນີນທຸລະກິດບໍລິການສະຖານທີ່ພັກແຮມ ແຕ່ລະປະເພດລ້ວນແຕ່ໄດ້ຮັບການຄຸ້ມຄອງ ແລະ ຕິດຕາມກວດກາ ຈາກອົງການກວດກາວຽກງານຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ ຕາມທີ່ໄດ້ກຳນົດຢູ່ໃນຂໍ້ຕົກລົງສະບັບນີ້.

ເນື້ອໃນກວດກາ ມີດັ່ງນີ້:

1. ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດ ແລະ ສັງຄົມ;
3. ກວດກາ ການປະຕິບັດມາດຕະຖານ ຂອງສະຖານທີ່ພັກແຮມ.

ອົງການກວດກາວຽກງານຄຸ້ມຄອງ ທຸລະກິດບໍລິການສະຖານທີ່ພັກແຮມ ສາມາດສະເໜີມາດຕະການແກ້ໄຂຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງທຸລະກິດບໍລິການສະຖານທີ່ພັກແຮມ.

**ມາດຕາ 56 ຮູບການກວດກາ**

ການກວດກາ ມີ 3 ຮູບການ ດັ່ງນີ້:

1. ກວດກາ ຕາມລະບົບປົກກະຕິ;
2. ກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງຄັ້ງ ຕໍ່ໜຶ່ງປີ ໂດຍກົມຄຸ້ມຄອງການທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບຄະນະກຳມະການປະສານງານການບໍລິການລົງທຶນປະຕູດຽວ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ/ຫຼື ທ້ອງຖິ່ນ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ຢ່າງໜ້ອຍ 24 ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາ ດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິງານ.

## ໝວດທີ 17
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 57 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້ ເຊັ່ນ: ການໄດ້ຮັບໃບຢັ້ງຢືນມາດຕະຖານສະຖານທີ່ພັກແຮມ ຕາມເງື່ອນໄຂ ແລະ ກຳນົດເວລາ, ໄດ້ຮັບການຍົກລະດັບມາດຕະຖານສະຖານທີ່ພັກແຮມ ຈາກລະດັບໜຶ່ງ ຂຶ້ນອີກລະດັບໜຶ່ງ, ຕໍ່ໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກຳນົດເວລາ ທີ່ທາງການກຳນົດໃຫ້, ການບໍລິຈາກເງິນ ແລະ ຊັບສິນ ເພື່ອຊ່ວຍເຫຼືອສັງຄົມ ແລະ ອື່ນໆ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 58 ມາດຕະການຕໍ່ກັບຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 59 ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ**

ໃນກໍລະນີເປັນການກະທຳຜິດຄັ້ງທີ່ໜຶ່ງ ແລະ ເປັນໂທດສະຖານເບົາ ທີ່ບໍ່ມີຄວາມເສຍຫາຍ ຫຼື ບາດເຈັບອັນຕະລາຍ ຈະຖືກສຶກສາອົບຮົມ, ກ່າວເຕືອນ ດ້ວຍຮູບການ ແລະ ວິທີການຕ່າງໆ ຕາມກົດໝາຍ ພ້ອມທັງແຈ້ງເຫດຜົນ ແລະ ການກະທຳຜິດໃຫ້ຮັບຊາບ ແລະ ລົງບັນທຶກໄວ້ເປັນຫຼັກຖານ.

**ມາດຕາ 60 ມາດຕະການປັບໃໝ ແລະ ໃຊ້ແທນຄ່າເສຍຫາຍ**

ໃນກໍລະນີ ເກີດຄວາມເສຍຫາຍ ແລະ ບາດເຈັບ:

- ຄັ້ງທີໜຶ່ງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 2,000,000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ;
- ຄັ້ງທີສອງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 4,000,000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ ແລະ ໂຈະການດຳເນີນທຸລະກິດຊົ່ວຄາວ 6 ເດືອນ;
- ຄັ້ງທີສາມ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ 6,000,000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ, ຖອນໃບອະນຸຍາດດຳເນີນທຸລະກິດຖາວອນ ແລະ ດຳເນີນຄະດີຕາມກົດໝາຍ.

## ໝວດທີ 18
## ບົດບັນຍັດສຸດທ້າຍ

**ມາດຕາ 61 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງການທ່ອງທ່ຽວ ເປັນເຈົ້າການ ປະສານສົມທົບກັບຄະນະກຳມະການປະສານງານ ການບໍລິການ ການລົງທຶນປະຕູດຽວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍການສ້າງລະບົບອີເລັກໂຕຣນິກ ເຊື່ອມຕໍ່ລະບົບອອນລາຍ ໃນການສື່ສານ, ການເກັບກຳຂໍ້ມູນ, ເອກະສານ ແລະ/ຫຼື ການອະນຸມັດລາຍເຊັນໃນຮູບແບບອີເລັກໂຕຣນິກ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສ.

ກົມກອງ, ອົງການປົກຄອງຂັ້ນທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການທຸລະກິດບໍລິການສະຖານທີ່ພັກແຮມ ທຸກປະເພດ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດຳເນີນທຸລະກິດ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 62 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ກຳນົດ ວ່າດ້ວຍ ການຄຸ້ມຄອງທຸລະກິດບໍລິການໂຮງແຮມ ແລະ ເຮືອນພັກ ສະບັບເລກທີ 159/ອທຊ, ລົງວັນທີ 30 ກໍລະກົດ 1997.

ຜູ້ປະກອບການທຸລະກິດບໍລິການສະຖານທີ່ພັກແຮມ ທີ່ໄດ້ຮັບອະນຸຍາດກ່ອນໜ້າຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ຕ້ອງຍົກລະດັບປັບປຸງທຸລະກິດຂອງຕົນ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້ພາຍໃນ 120 ວັນ ນັບແຕ່ມື້ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ກົດລະບຽບ, ຂໍ້ຕົກລົງ ແລະ ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

**ສອນສະຫວັນ ວິຍະເກດ**